# ນຳໃຊ້ອິນເຕີເນັດໃຫ້ປອດໄພ

- ໂພສເຕີລາວເຊີດ
- ປ້ອງກັນໂຕເອງບໍ່ໃຫ້ຕົກເປັນເຫຍື່ອທາງອິນເຕີເນັດ
- ການປ້ອງກັນລະຫັດຜ່ານ
- ໄພຄຸກຄາມຕ່າງໆ ທາງອິນເຕີເນັດ
- ສື່ສັງຄົມອອນລາຍ
- ການນຳໃຊ້ສະມາດໂຟນ

# “ ຮູ້ທັນ, ປ້ອງກັນ ແລະ ລະມັດລະວັງໄພທາງອິນເຕີເນັດ “















# ໂພສເຕີ ລາວເຊີດ




ຢ່າປ່ອຍໃຫ້ຕົວທ່ານ ຕົກເປັນເຫຍື່ອທາງອິນເຕີເນັດ

**Don't Fall Into Cyber Trap**

ການປ້ອງກັນສາມາດເຮັດໄດ້ດ້ວຍຕົວທ່ານເອງ

**You are your own protection**

LaoCERT
Lao Computer Emergency Response Team

# ຮັກສາຂໍ້ມູນໃຫ້ມີຄວາມປອດໄພ

- ຄວາມປອດໄພສະມາດໂຟນ
- ວາຍເລັສແລນ ( ເຄື່ອຂ່າຍໄຮ້ສາຍ )
- ໜຶ່ງ-ຄຼິກ ສໍ້ໂກງ
- ການໂຈມຕີທາງອີເມລ
- ການໂຈມຕີແບບ DDoS
- ມາລະຍາດເມື່ອນຳໃຊ້ອິນເຕີເນັດ
- ການຕັ້ງຄ່າທີ່ເໝາະສົມຂອງລະຫັດຜ່ານ
- ສະແປມເມລ




LaoCERT
Lao Computer Emergency Response Team

# ປ້ອງກັນໂຕເອງຈາກການຕົກເປັນເຫຍື່ອທາງອິນເຕີເນັດ

- ອັບເດດລະບົບປະຕິບັດການ ແລະ ໂປຼແກຼມແອນຕີ້ໄວຣັສເປັນປະຈຳ
- ຄວນສະແກນອຸປະກອນເກັບຂໍ້ມູນທຸກຄັ້ງກ່ອນຈະນຳມາໃຊ້ວຽກ ເຊັ່ນວ່າ : ກາດຄວາມຈຳ ຫຼື Flash Drive, External Harddisk ແລະ ອື່ນໆ .
- ຕິດຕັ້ງ Firewall ເພື່ອປ້ອງກັນການໂຈມຕີຈາກ Hacker ແລະ ເປັນການປ້ອງກັນການຮັບ-ສົ່ງ ຂໍ້ມູນທີ່ເຮົາບໍ່ຕ້ອງການ ລວມທັງ ສະປາຍແວ ຫຼື program ອື່ນໆທີ່ອາດຈະເປັນການເປີດຊ່ອງໂຫວໃນການໂຈມຕີ
- ລະມັດລະວັງໃນການຫຼິ້ນອິນເຕີເນັດເພີ່ມຂຶ້ນ ໂດຍການເຂົ້າເວັບໄຊ໌ດ້ວຍ Https
- ສ້າງໂຕເອງໃຫ້ເປັນຄົນຮອບຄອບ ແລະ ຄິດຢູ່ສະເໝີວ່າ "ປອດໄພໄວ້ກ່ອນ"
- ຕິດຕາມຂ່າວສານ ຮູບແບບການໂຈມຕີໃຫມ່ໆຢູ່ສະເໝີ ເພື່ອທີ່ຈະໄດ້ລະມັດລະວັງ ແລະ ຫາທາງປ້ອງກັນໄພທີ່ອາດຈະເກີດຂຶ້ນໄດ້.

LaoCERT
Lao Computer Emergency Response Team

# ການປ້ອງກັນລະຫັດຜ່ານ



1. ຄວນໃຊ້ລະຫັດຜ່ານທີ່ແຂງແກ່ນ ໂດຍການປະສົມຂອງບັນດາຕົວອັກສອນໃຫຍ່,ນ້ອຍ,ຕົວເລກ ແລະ ອັກສອນພິເສດ ເຊັ່ນ: L@oCeRT_20!3, XXXXXXXX
2. ຢ່າເປີດເຜີຍລະຫັດຜ່ານໃຫ້ຜູ້ອື່ນຮູ້.
3. ບໍ່ຄວນໃຊ້ລະຫັດຜ່ານທີ່ງ່າຍເກີນໄປເຊັ່ນ:9999, 1234, aaaa, abcd ຫຼື ເບີໂທລະສັບ,ວັນເດືອນປີເກີດ ແລະ ຄຳສັບຢູ່ໃນພົດຈະນານຸກົມ.
4. ບໍ່ຄວນກຳນົດຄວາມຍາວຂອງລະຫັດຜ່ານນ້ອຍກວ່າ 8 ຕົວອັກສອນ.
5. ຫ້າມເປີດເຜີຍລະຫັດຜ່ານທາງອີເມລ, ທາງໂທລະສັບ ຫຼື ຂຽນປະໄວ້ຊະຊາຍ.
6. ຄວນປ່ຽນລະຫັດຜ່ານເປັນປະຈຳ.
7. ຄວນເກັບຮັກສາລະຫັດຜ່ານໄວ້ໃຫ້ເປັນຄວາມລັບຢູ່ສະເໝີ.

LaoCERT
Lao Computer Emergency Response Team

# ລະວັງຈະຕົກເປັນເຫຍື່ອຂອງການຫຼອກລວງ (ໜຶ່ງ-ລຶກ ສໍ້ໂກງ)




1. ຫ້າມ ຕອບອີເມລທີ່ຖາມເຖິງຂໍ້ມູນສ່ວນຕົວ ຫຼື ຂໍ້ມູນທາງການເງິນ.
2. ຫ້າມ Click link ທີ່ຢູ່ໃນອີເມລ.
3. ຄວນໃຊ້ໂປຼແກຼມປ້ອງກັນ Virus & Firewall ໃໝ່ຢູ່ສະເໝີ.
4. ຄວນລຶບຂໍ້ມູນທີ່ຄັດຕິດມານຳອີເມລອອກທັນທີ.

Phishing ແມ່ນການຫຼອກລໍ້ໃຫ້ເຫຍື່ອເປີດເຜີຍຂໍ້ມູນສ່ວນຕົວເຊັ່ນ : ລະຫັດບັດເຄຼດິດ, ຂໍ້ມູນບັນຊີທະນາຄານ, ອື່ນໆ. ດ້ວຍຮູບແບບຂອງ Email,Popup SMS ແລະ Web ຕ່າງໆ.

LaoCERT
Lao Computer Emergency Response Team

# ການປ້ອງກັນສະແປມເມລ




1. ຫ້າມ ເປີດອ່ານອີເມລທີ່ບໍ່ຮູ້ແຫຼ່ງທີ່ມາ.
2. ຫ້າມ Click Link ທີ່ມານຳອີເມລ.
3. ຫ້າມ ຕອບກັບ ຫຼື ສົ່ງຕໍ່ສະແປມອີເມລ.
4. ຫ້າມ ເປີດອ່ານສະແປມອີເມລ.
5. ຫ້າມ ສົ່ງຕໍ່ອີເມລທີ່ບໍ່ຮູ້ທີ່ໄປທີ່ມາ.
6. ໃຫ້ ລຶບສະແປມອີເມລຖິ້ມທັນທີ.
7. ໃຫ້ ເປີດໃຊ້ Anti Spam Email.

ສາມາດດາວໂຫຼດໂປຼແກຼມນີ້ໄດ້ຈາກ:

http://software.thaiware.com/7893-AntiSPAM_Guard.html

http://www.spamfighter.com/SPAMfighter/Lang_TH/Product_Info.asp

Spam Mail ແມ່ນອີເມລທີ່ເຮົາບໍ່ຕ້ອງການ ແລະ ສົ່ງມາຈາກຄົນທີ່ເຮົາບໍ່ຮູ້ຈັກກັນເຊັ່ນ : ຈົດໝາຍ, ຈົດໝາຍຫຼອກລວງຕ່າງໆ ທີ່ແອບແຝງຕິດມານຳ Spam ຄື: Virus, Spyware & Bots.

LaoCERT
Lao Computer Emergency Response Team

# BackDoor ແລະ Botnets

- Backdoor ເຮັດໜ້າທີ່ເປີດທາງໃຫ້ຜູ້ບໍ່ປະສົງດີ ສາມາດຣີໂໝດເຂົ້າໄປຫາເຄື່ອງຄອມພິວເຕີຂອງເຮົາ ໄດ້. ສ່ວນຫຼາຍຈະມາກັບການຕິດຕັ້ງ Application ຫຼື ໂປຼແກຼມທີ່ຜິດກົດໝາຍ.




- ຄອມພິວເຕີທີ່ຖືກບັນດາ Hacker ເຂົ້າຄວບຄຸມ ເຄື່ອງເປັນທີ່ຮຽບຮ້ອຍແລ້ວ ນັ້ນເອີ້ນວ່າ “Botnets” ເຊິ່ງກາຍເປັນເຄືອຂ່າຍຂອງ Hacker ເພື່ອໃຊ້ໃນ ການກະທຳຜິດ ເຊັ່ນ : ສົ່ງສະແປມເມລ ຫຼື ເປັນຖານ ໃນການໂຈມຕີເປົ້າໝາຍແບບ DDoS ເປັນຕົ້ນ

LaoCERT
Lao Computer Emergency Response Team

# ການໂຈມຕີແບບ DDoS




- ເປັນການໂຈມຕີ ທີ່ເຈາະຈົງໄປຫາເຄື່ອງແມ່ຂ່າຍ ຫຼື ເຄື່ອງເຊີເວີ ເຊິ່ງຈະໂຈມຕີໂດຍເຄື່ອງຄອມພິວເຕີທີ່ຮຸກຮານ ຜ່ານຫຼາຍໆເຄື່ອຂ່າຍພ້ອມກັນ
- ເຮັດໃຫ້ເກີດຄວາມແອອັດໃນສາຍການສື່ສານ
- ໃນທີ່ສຸດເຄື່ອງແມ່ຂ່າຍກໍ່ຢຸດທຳງານ

LaoCERT
Lao Computer Emergency Response Team

# ສື່ສັງຄົມອອນລາຍແມ່ນຫຍັງ?

- ແມ່ນຊ່ອງທາງໃນການຕິດຕໍ່ສື່ສານຜ່ານລະບົບອິນເຕີເນັດ ທີ່ບຸກຄົນທົ່ວໄປສາມາດນຳສະເໜີຂໍ້ມູນ, ຮູບພາບ, ວິດີໂອ, ຂໍ້ຄວາມ ຫຼື ເຫດການຕ່າງໆ ໄດ້ດ້ວຍຕົວເອງ ອອກສູ່ສາທາລະນະໂດຍໃຊ້ໂທລະສັບມືຖື ຫຼື ອຸປະກອນສື່ສານປະເພດຕ່າງໆ.
- ທຸກທີ່ທຸກເວລາສິ່ງຕໍ່ຂ່າວສານໄດ້ວ່ອງໄວ, ມີທັງດ້ານດີ ແລະ ດ້ານຫຍໍ້ທໍ້ ປຽບສະເໝືອນມີດສອງຄົມ ໃຊ້ດີກໍ່ເປັນປະໂຫຍດ ໃຊ້ບໍ່ຖືກກໍ່ທຳລາຍຕົນເອງ.
- ເປັນການປ່ຽນສະພາບຈາກຄົນອ່ານຂ່າວ, ຟັງຂ່າວ, ເບິ່ງຂ່າວ ເປັນນັກຂ່າວ, ນັກວິເຄາະ ແລະ ນັກວິຈານ ປະກົດການລັກສະນະນີ້ກຳລັງເປັນແນວໂນ້ມໃໝ່ຂອງສື່ສານມວນຊົນຍຸກອິນເຕີເນັດ.

LaoCERT
Lao Computer Emergency Response Team

# 10 ອັນດັບທີ່ມັກໃຊ້ຫຼາຍໂດຍທົ່ວໄປ

1. facebook.com
2. twitter.com
3. Google
4. linkedIn.com
5. Youtube.com
6. flickr.com
7. myspace.com
8. Wikipedia.org
9. bing.com
10. livejournal.com

# ຂໍ້ດີ

- ສາມາດແລກປ່ຽນຂໍ້ມູນ, ຂ່າວສານຕ່າງໆ ໄດ້ຢ່າງວ່ອງໄວ.
- ເປັນຄັງຂໍ້ມູນຄວາມຮູ້ຂະໜາດນ້ອຍເພາະເຮົາສາມາດສະເໜີຄວາມຄິດເຫັນ ແລກປ່ຽນຄວາມຮູ້ ຫຼື ຕັ້ງຄຳຖາມໃນເລື່ອງຕ່າງໆ ເພື່ອໃຫ້ບຸກຄົນອື່ນທີ່ສົນໃຈໄດ້ຊ່ວຍກັນຕອບ.
- ປະຫຍັດຄ່າໃຊ້ຈ່າຍໃນການຕິດຕໍ່ສື່ສານກັບຄົນອື່ນ ສະດວກ ແລະ ວ່ອງໄວ.
- ເປັນສື່ໃນການນຳສະເໜີຜົນງານຂອງຕົວເອງເຊັ່ນ:ງານຂຽນ, ຮູບພາບ, ວີດີໂອ ຕ່າງໆ ເພື່ອໃຫ້ຜູ້ອື່ນໄດ້ເຂົ້າມາຮັບຊົມ ແລະ ສະແດງຄວາມຄິດເຫັນ.
- ໃຊ້ເປັນສື່ໃນການໂຄສະນາ ປະຊາສຳພັນ ສິນຄ້າ ຫຼື ບໍລິການລູກຄ້າສຳລັບບໍລິສັດ ແລະ ອົງກອນຕ່າງ ໆ ຊ່ວຍສ້າງຄວາມເຊື່ອມັ່ນໃຫ້ລູກຄ້າ.
- ຫາເພື່ອນທີ່ຮູ້ໃຈ, ສ້າງຄວາມສຳພັນທີ່ດີຈາກເພື່ອນສູ່ເພື່ອນ.

LaoCERT Lao Computer Emergency Response Team

# ຂໍ້ເສຍ

- Social Network ເປັນສັງຄົມອອນໄລທີ່ກວ້າງ ຫາກຜູ້ໃຊ້ຮູ້ເທົ່າບໍ່ເຖິງການ ຫລື ຂາດວິຈາລະນະຍານ ອາດຈະຖືກຫຼອກລວງໄດ້(ດັ່ງນັ້ນ, ຕ້ອງປະຕິບັດຕາມຄຳແນະນຳຢ່າງເຄັ່ງຄັດ).
- ອາດມີຄົນນຳຮູບ ຫຼື ຂໍ້ມູນສ່ວນຕົວຕ່າງໆຂອງເຮົາໄປໃຊ້ໃນທາງທີ່ຜິດ.
- ໃນເຄືອຂ່າຍອິນເຕີເນັດ ເປັນແຫຼ່ງເຜີຍແຜ່ໄວຣັສ ໄດ້ເປັນຢ່າງດີ.
- ອາດມີຄົນລັກລອບເອົາບັນຊີຂອງເຮົາໄປແອບອ້າງ ກະທຳຜິດຕ່າງໆ ຈົນເກີດຜົນເສຍຫາຍໄດ້
- ຖ້າໃຊ້ຊີວິດຢູ່ກັບ Social network ຫຼາຍເກີນໄປອາດເຮັດໃຫ້:
  - ເສຍການຮຽນ.
  - ຜົນການປະຕິບັດວຽກງານ ບໍ່ໄດ້ດີ.
  - ເສຍເວລາ.
  - ເສຍສຸຂະພາບ.

# ໃຊ້ເຄືອຂ່າຍສັງຄົມອອນລາຍແນວໃດຈຶ່ງຈະປອດໄພ




1. ບໍ່ຄວນ ເປີດເຜີຍຂໍ້ມູນສ່ວນຕົວຫຼາຍເກີນໄປ.
2. ບໍ່ຄວນ Post ຂໍ້ມູນສ່ວນຕົວຂອງຜູ້ອື່ນ, ຊຶ່ງອາດເຮັດໃຫ້ຜູ້ອື່ນໄດ້ຮັບຄວາມເສຍຫາຍ ແລະ ນຳຜົນສະທ້ອນຄືນສູ່ຕົນ.
3. ຄວນ ຈຳໄວ້ວ່າທຸກຢ່າງທີ່ Post ຂຶ້ນໄປແລ້ວນັ້ນຄວາມເປັນສ່ວນຕົວຈະໝົດໄປທັນທີ.
4. ຄວນ ລຶບທຸກຂໍ້ຄວາມທີ່ບໍ່ເໝາະສົມອອກ.
5. ຄວນ ລະມັດລະວັງໃຫ້ຫຼາຍກ່ຽວກັບຄຳຖາມຂໍ້ມູນສ່ວນຕົວໃນເວລາສົນທະນາກັບຄົນທີ່ຫາກໍ່ຮູ້ຈັກກັນ.
6. ຄວນ ເພີ່ມບຸກຄົນທີ່ຮູ້ຈັກກັນດີເທົ່ານັ້ນເຂົ້າມາເປັນເພື່ອນ.
7. ຄວນ ກວດສອບລະບຽບການຕ່າງໆໃນການນຳໃຊ້ເຄືອຂ່າຍສັງຄົມອອນລາຍ ເຊັ່ນ: Facebook, Youtube,...ກ່ອນນຳໃຊ້.

LaoCERT
Lao Computer Emergency Response Team

# Chat ແນວໃດຈຶ່ງຈະປອດໄພ



- ຫ້າມໃຫ້ຜູ້ອື່ນຮູ້ກ່ຽວກັບຂໍ້ມູນທີ່ສຳຄັນຂອງຕົນເອງ.
- ຫ້າມ ເລືອກ Option “Remember Password” ໃນການພິມຊື່ ແລະ ລະຫັດຜ່ານເຂົ້າເຄື່ອງອິນເຕີເນັດສາທາລະນະ.
- ຄວນໃຊ້ຊື່ຫຼິ້ນ ແທນ ຊື່ແທ້.
- ຄວນ ລະມັດລະວັງໃນການນັດພົບກັບຄົນແປກໜ້າ ທີ່ຮູ້ຈັກກັນໃນການ Chat.
- ຄວນ ເປີດ Files ໃນການ Chat ສະເພາະຄົນທີ່ຮູ້ຈັກກັນດີເທົ່ານັ້ນ.

LaoCERT
Lao Computer Emergency Response Team

# ພຶດຕິກຳການນຳໃຊ້ສະມາດໂຟນ



# ນຳໃຊ້ໂທລະສັບມືຖືໃຫ້ປອດໄພ.

- ບໍ່ຄວນບອກເລກໂທລະສັບຂອງຕົນເອງສູ່ຜູ້ອື່ນ, ບໍ່ຄວນລົມໂທລະສັບ, ແຊັດ ກັບຄົນທີ່ບໍ່ຮູ້ຈັກກັນ.
- ຄວນຮູ້ຈັກການຕອບປະຕິເສດການຮັບໂທລະສັບຈາກບຸກຄົນທີ່ບໍ່ຮູ້ຈັກ.
- ເມື່ອເຮັດໂທລະສັບມືຖືເສຍ ຫຼື ຖືກລັກຄວນແຈ້ງໃຫ້ຕຳຫຼວດ ຫຼື ບໍລິສັດທີ່ໃຫ້ການບໍລິການໂທລະສັບມືຖືນັ້ນໂດຍດ່ວນ.
- ບໍ່ຄວນນຳເອົາໂທລະສັບມືຖືຂອງຕົນເອງຖ່າຍຮູບ ຫຼື ຖ່າຍວິດີໂອກ່ອນໄດ້ຮັບອະນຸຍາດຈາກບຸກຄົນທີ່ກ່ຽວຂ້ອງ.
- ບໍ່ຄວນປ່ອຍໃຫ້ບຸກຄົນອື່ນຖ່າຍຮູບ ຫຼື ຖ່າຍວິດີໂອຂອງຕົນເອງໂດຍທີ່ບໍ່ໄດ້ຮັບອະນຸຍາດຈາກຕົນເອງກ່ອນ, ຮູບ ຫຼື ວິດີໂອທີ່ຖ່າຍນັ້ນອາດຖືກນຳໄປເຜີຍແຜ່ລົງທາງອິນເຕີເນັດ.
- ປັບປຸງລະບົບປະຕິບັດການ, ໂປຼແກຼມຕ່າງໆ ໃຫ້ຢູ່ໃນສະພາບໃໝ່ລ່າສຸດ.
- ເວລາດາວໂຫລດໂປຼແກຼມຕ່າງໆ ໃຫ້ກວດສອບໃຫ້ແນ່ໃຈວ່າເວບໄຊ,ໂປຼແກຼມນັ້ນສາມາດເຊື່ອຖືໄດ້.

LaoCERT
Lao Computer Emergency Response Team

# ພະແນກ ສະກັດກັ້ນ ແລະ ແກ້ໄຂເຫດສຸກເສີນທາງຄອມພິວເຕີ




ຕິດຕໍ່ ລາວເຊີດ ໄດ້ທີ່ : www.laocert.gov.la

LaoCERT
Lao Computer Emergency Response Team